# ຊົມເຊີຍຜົນສຳເລັດ ກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ ຂອງ ທຄຕລ ປະຈຳປີ 2024 ແລະ ວາງທິດທາງແຜນການ ປະຈຳປີ 2025.

## BCEL Successfully Concluded Meeting to Review 2024 Business Results and Establish Strategic Direction for 2025.

ໃນວັນທີ 06 ກຸມພາ 2025 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດ ປະຈຳປີ 2024 ແລະ ວາງທິດທາງແຜນການ ປະຈຳປີ 2025 ທີ່ ໂຮງແຮມ Latsavong Wanda Vista, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ, ໂດຍມີບັນດາທ່ານຄະນະອຳນວຍການ, ຄະນະພະແນກ, ສູນ, ແລະ ສາຂາ ທົ່ວລະບົບ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

On February 6, 2025, BCEL convened a meeting at the Latsavong Wanda Vista Hotel in Vientiane to review the business outcomes for 2024 and to develop the strategic plan for 2025. Under the leadership of Mrs. Saysamone CHANTHACHACK, Managing Director of BCEL, all managing directors, department heads, center leaders, branch managers, and relevant staff members participated in the meeting.




ກອງປະຊຸມດັ່ງກ່າວໄດ້ລາຍງານການປະຕິບັດວຽກງານທີ່ພົ້ນເດັ່ນ ແລະ ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2024 ພ້ອມທັງຍົກໃຫ້ເຫັນສະພາບການເຄື່ອນໄຫວຮອບດ້ານ, ຜົນງານທີ່ ທຄຕລ ຍາດມາໄດ້ ແລະ ຂໍ້ຄົງຄ້າງ ໃນໄລຍະ 01 ປີຜ່ານມາ ແລະ ສິ່ງທ້າທາຍໃນຕໍ່ໜ້າ ເພື່ອຕີລາຄາ ແລະ ປຶກສາຫາລືຊອກຫາວິທີປັບປຸງແກ້ໄຂໃຫ້ສອດຄ່ອງກັບສະພາບໃນປະຈຸບັນ.

The meeting provided insights on the outstanding performance and business outcomes for 2024, emphasizing the overall status of activities, the achievements attained by BCEL, and the remaining tasks and challenges from the previous year. These challenges were thoroughly analysed in order to develop the strategic solution aligned with the current circumstances.




ຜົນການດຳເນີນງານ ໃນປີ 2024 ໂດຍລວມແມ່ນເຫັນວ່າ ສາມາດປະຕິບັດໄດ້ດີ ໃນຫລາຍດ້ານ, ພິເສດແມ່ນກຳໄລສຸດທິ ປີ 2024 ປະຕິບັດໄດ້ລື່ນແຜນສູງສົມຄວນ (ລາຍລະອຽດແມ່ນຈະເປີດເຜີຍຢ່າງເປັນທາງການຫຼັງຜ່ານການກວດສອບຈາກບໍລິສັດກວດສອບພາຍນອກຕາມມາດຕະຖານສາກົນ).

The overall performance in 2024 is expected to delivery impressive results across various dimensions, particularly the net profit for the year is expected to surpass the planned figures. Detailed information will be officially released following the completion of the audit report in accordance with IFRS to be prepared by the independent auditor.

ນອກຈາກນັ້ນ, ກອງປະຊຸມໄດ້ສະຫຼຸບຜົນການຈັດຕັ້ງປະຕິບັດ KPI ແລະ ມອບໃບຍ້ອງຍໍໃຫ້ແກ່ບັນດາສາຂາທີ່ປະຕິບັດ KPI ດີເດັ່ນ ແລະ ລາງວັນດີເດັ່ນດ້ານຕ່າງໆທີ່ປິ່ນອ້ອມ KPI ລວມເຖິງການຈັດຂັ້ນສາຂາ, ໜ່ວຍບໍລິການ ສາຂາທົ່ວລະບົບ ປະຈຳປີ 2024 ແລະ ທິດທາງແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນປີ 2025.

Furthermore, the meeting summarized outcomes related to the implementation of Key Performance Indicators (KPIs) and awarded certificates of appreciation to branches that excelled in their KPI performance. Outstanding awards were presented in various categories associated with KPIs, highlighting the organization of branches and service units across the system for the year 2024, along with outlining the strategic plan for executing these initiatives in 2025.

ໃນຕອນທ້າຍກອງປະຊຸມ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ໄດ້ໃຫ້ກຽດໂອ້ລົມ ພ້ອມທັງ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນປີ 2024 ເຊິ່ງລ້ວນແລ້ວແຕ່ເປັນໝາກຜົນຮ່ວມກັນ ຂອງ ພະນັກງານ ທຄຕລ ທັງໝົດທຸກພາກສ່ວນ, ພ້ອມທັງໃຫ້ທິດຊີ້ນຳ ໂດຍເນັ້ນໜັກບາງວຽກງານ ໃນຕໍ່ໜ້າ ເພື່ອ ສືບຕໍ່ພັດທະນາຜະລິດຕະພັນຕ່າງໆ ໃຫ້ມີຄວາມທັນສະໄໝ - ສາມາດຕອບໂຈດຄວາມຕ້ອງການຂອງທຸກກຸ່ມລູກຄ້າ ຕາມແນວທາງນະໂຍບາຍຂອງພັກລັດ ແລະ ຍັງເນັ້ນໃສ່ໃຫ້ທຸກພາກສ່ວນຮ່ວມແຮງກັນພັດທະນາ ທຄຕລ ໃຫ້ເປັນ ທະນາຄານ ທີ່ມີຄວາມເຂັ້ມແຂງ ທັນສະໄໝ ແລະ ໄດ້ມາດຕະຖານສາກົນ.

At the conclusion of the meeting, Mrs. Saysamone CHANTHACHACK delivered a speech acknowledging the accomplishments of 2024. She highlighted that these achievements were the result of the collective effort of all BCEL employees across various departments. Additionally, she outlined the future directions, stressing the importance of continuing to innovate and modernize products to cater to the diverse needs of all customer segments in alignment with government policies. She also underscored the necessity for collaboration among all stakeholders to transform BCEL into a robust, modern institution that adheres to international standards.













